ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນແບບລວມກິດຈະການ (ກ່ອນການກວດສອບ)

ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ໃບລາຍງານຖານະການເງິນແບບລວມກິດຈະການ	*5 - 6*
ໃບລາຍງານຜົນການດຳເນີນງານແບບລວມກິດຈະການ	*7*
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບລວມກິດຈະການ	*8*
ໃບລາຍງານກະແສເງິນສົດແບບລວມກິດຈະການ	*9 - 10*
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແບບລວມກິດຈະການ	11 - 34

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊີມັ້ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ້ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນ ດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ສາທາລະນະຄັ້ງທຳອິດ (IPO) ເລກທີ 008/ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະໂດຍມີຮຸ້ນຂອງ ບໍລິສັດຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດ ຫຼັກຊັບລາວ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັ້ງ ແລະ ຜະລິດຕະພັນຊີມັ້ງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ບໍລິການການທ່ອງທ່ຽວ (ພາຍໃນ ແລະ ຕ່າງ ປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ.

ວັນທີ 30 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3330/ຈທວ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດສຳຫຼັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ.

ວັນທີ 24 ມິຖຸນາ 2025, ບໍລິສັດໄດ້ຮັບໃບອະນຸຍາດດຳເນີນທຸລະກິດຄອນໂດມິນຽມຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຊິ່ງໄດ້ອະນຸຍາດໃຫ້ບໍລິສັດດຳເນີນກິດຈະການທີ່ກ່ຽວຂ້ອງກັບຄອນໂດມິນຽມເພື່ອຂາຍ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 30 ກັນຍາ 2026 ມີລາຍລະອຽດດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັນ*
Yunnan Hengshi Chengrui Holdings Co., Ltd (ກ່ອນໜ້ານີ້ແມ່ນໃນນາມ Yunnan Qianhan Technology Network Limited ("Yunnan Qianhan"))	14,280,000	35.696%
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34.297%
ບໍລິສັດ ຫຼັກຊັບລາວ - ຈີນ ຈຳກັດ (LCS)	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.139%
	40,004,000	

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງກຸ່ມບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັ້ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026 ແລະ ນະວັນທີຂອງບົດລາຍງານສະບັບນີ້ ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນ້ຍ ເຫຼີຍ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວັນທອງ ສິດທິກຸນ	ຮອງປະທານ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020
ທ່ານ ສິນທະນູ	ຮອງປະທານ	ແຕ່ງຕັ້ງນະວັນທີ 28 ມີຖຸນາ 2024
ສົມຟອງບຸດຕະຂັນ		
ທ່ານ ຈ່າງ ຈີ່ງຫົວ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຊ້າຍ ຫລິງຫລິງ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕົ້ງ ຢູ້ຕົ້ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ສີ ຢູຫົງ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024
ທ່ານ ຄຳບົນ ໄຊເລົ່າວົງ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020
ທ່ານ ໄຕ ຫຼົງຫົວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຫຼຸຍ ຫຼີນ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວິຄຳແດງ ອິນທະໄຊ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024

ຄະນະ ອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນໄລຍະສາມທີ່ສິ້ນສຸດ ວັນທີ 30 ກັນຍາ 2026 ແລະ ນະວັນທີຂອງບົດ ລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ຫລິວ ຮ້າວ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງນະວັນທີ 23ທັນວາ 2025
ທ່ານ ເນ້ຍ ເຫຼີຍ	ຜູ້ອຳນວຍການໃຫຍ່	ລາອອກວັນທີ 23 ທັນວາ 2025
ທ່ານ ຈ່າງ ຈີ່ງຫົວ	ຫົວໜ້າຝ່າຍການເງິນ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຄຳບົນ ໄຊເລົ່າວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມີຖຸນາ 2020
ທ່ານ ສິນທະນູ		ແຕ່ງຕັ້ງນະວັນທີ 28 ສິງຫາ 2024
ສົມຟອງບຸດຕະຂັນ	ຮອງຜູ້ອຳນວຍການ	
ທ່ານ ນາງ ສີ ຢູຫົງ	ເລຂາສະພາບໍລິຫານ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026 ແລະ ນະວັນທີຂອງ ບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ໄຕ ຫຼົງຫົວ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຫຼີວ ເຫວີນຈູ້	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມີນາ 2025
ທ່ານ ວິຄຳແດງ ອິນທະໄຊ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຜູ້ຕາງໜ້າທາງດ້ານກົດໝາຍ

ຜູ້ຕາງໜ້າທາງດ້ານກົດໝາຍຂອງບໍລິສັດໃນໄລຍະເວລາ ແລະ ນະອັນທີອອກບົດລາຍງານສະບັບນີ້ ແມ່ນ ທ່ານ ເນ້ຍ ເຫຼຍ, ປະທານ ສະພາບໍລິຫານ.

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະ ສານລາຍງານການເງິນແບບລວມກິດຈະການຂອງບໍລິສັດ ແລະ ບໍລິສັດໃນເຄືອ (ລວມກັນເອີ້ນວ່າ ກຸ່ມບໍລິສັດ) ສຳລັບໄລຍະສາມ ເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026. ("ເອກະສານລາຍງານການເງິນແບບລວມກິດຈະການ").

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນການປິແບບລວມກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບລວມກິດຈະການ ເຊິ່ງຖືກກະກຽມອີງຕາມນະໂຍບາຍການ ບັນຊີດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບລວມກິດຈະການ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະ ສົງນຳສະເໜີຖານະການເງິນການປິແບບລວມກິດຈະການ, ຜົນຂອງການດຳເນີນງານແບບລວມກິດຈະການ ແລະ ກະແສເງິນສົດແບບລວມກິດຈະການ ຂອງກຸ່ມບໍລິສັດໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານການເງິນແບບລວມກິດຈະການ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕາມ ມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນແບບລວມກິດຈະການຍຶນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ກຸ່ມບໍລິ ສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າກຸ່ມບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງກຸ່ມບໍລິສັດຢ່າງສົມເຫດສົມຜົນ ຕະຫຼອດເວລາ, ກ່ຽວກັບຖານະທາງການເງິນແບບລວມກິດຈະການຂອງກຸ່ມບໍລິສັດ ແລະ ຮັບປະກັນວ່າເອກະສານລາຍງານການເງິນແບບລວມກິດ ຈະການແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງກຸ່ມບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດ ຂອງກຸ່ມບໍລິສັດ ແລະ ຮັບປະກັນວ່າກຸ່ມບໍລິສັດມີຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.
ຄະນະອຳນວຍການຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງ ໃນການກະກຽມເອກະສານລາຍງານການເງິນແບບລວມກິດຈະການສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການມີຄວາມຍິນດີຖະແຫຼງວ່າເອກະສານລາຍງານການເງິນແບບລວມກິດຈະການແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງສອດ ຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນແບບລວມກິດຈະການ.

ໃນນາມຂອງຄະນະອຳນວຍການ:

ທ່ານ ຫລີ ຮົ້ວ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພະຈິກ 2026

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະການເງິນແບບລວມກິດຈະການ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026

	ບົດອະທິບາຍ ເລກທີ	***30 ກັນຍາ 2026*** *ກີບ*	***31 ທັນວາ 2025*** *ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	1,064,070,518	1,276,390,036
ຊັບສິນພວມກໍ່ສ້າງ	6	18,652,821,322	19,908,964,250
ຊັບສົມບັດຄົງທີ່ບໍ່ມີຕົວຕົນ	5	3,761,606,880	3,779,367,504
ລວມຊັບສິນບໍ່ໝຸນວຽນ		**23,478,498,720**	**24,964,721,790**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	7	64,810,954,938	7,260,703,435
ເຄື່ອງໃນສາງ	8	42,004,845,958	74,687,556,805
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	21	1,000,000,000	1,000,000,000
ໜີ້ຕ້ອງຮັບທາງການຄ້າ	9	15,700,000	36,021,574
ເງິນສົດ	10	423,987,953	788,807,469
ລວມຊັບ ສິນໝຸນວຽນ		**108,255,488,849**	**83,773,089,283**
ລວມຊັບ ສິນທັງໝົດ		**131,733,987,569**	**108,737,811,073**

ໃບລາຍງານຖານະການເງິນແບບລວມກິດຈະການ (ກ່ອນການກວດສອບ) (ຕໍ່)
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026

	ບົດອະທິບາຍ ເລກທີ	***30 ກັນຍາ 2026*** *ກີບ*	***31 ທັນວາ 2025*** *ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນ ວຽນ			
ໜີ້ຕ້ອງສົ່ງການຄ້າ	11	5,538,092,427	6,408,794,853
ລາຍຮັບລໍຖ້າຮັບຮູ້	12		-
ເງິນລ່ວງໜ້າຈາກລູກຄ້າ	13	32,365,175,132	25,583,759,134
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	22	19,240,098,083	12,969,716,098
ພັນທະອາກອນ	14	12,506,690,103	9,258,847,470
ໜີ້ຕ້ອງສົ່ງໃຫ້ພະນັກງານ		20,467,194,197	15,354,513,104
ໜີ້ຕ້ອງສົ່ງອື່ນໆ	15	108,808,850,509	83,897,242,635
ລວມໜີ້ສິນໝຸນວຽນ		**198,926,100,450**	**153,472,873,29**
ລວມໜີ້ສິນທັງໝົດ		**198,926,100,450**	15,354,513,104
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	16	20,002,000,000	20,002,000,000
ສ່ວນເພີ່ມມູນຄ່າຮຸ້ນ		18,385,975,512	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,545	7,704,052,54
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,595	18,549,465,596
ຂາດທຶນສະສົມ		(131,833,606,533)	(109,376,555,874)
ລວມທຶນ		(67,192,112,881)	**(44,735,062,221)**
ລວມໜີ້ສິນ ແລະ ທຶນທັງໝົດ		**131,733,987,569**	**108,737,811,073**

ທ່ານ ທລິວ ຮ້າວ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພະຈິກ 2026

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

*ໃບລາຍງານຜົນການດຳເນີນງານ**ແບບລວມກິດຈະການ (ກ່ອນການກວດສອບ)***
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026

	ບົດອະທິບາຍ ເລກທີ	*ສຳລັບໄລຍະສາມເດືອນ ທີ່ສິ້ນສຸດ* ***ວັນທີ 30 ກັນຍາ 2026*** ກີບ	*ສຳລັບໄລຍະສາມເດືອນ ທີ່ສິ້ນສຸດ* ***ວັນທີ 30 ກັນຍາ 2025*** ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	17	1,045,729,545	478,350,000
ລາຍຈ່າຍຈາກການດຳເນີນງານອື່ນໆ	18	(8,667,351)	(326,998,615)
ລາຍຈ່າຍໃນການບໍລິຫານ	19	(3,564,220,943)	-
ຂາດທຶນຈາກ ການ ດຳ ເນີນ ງານ		**(2,527,158,749)**	**(4,506,956,961)**
ລາຍຮັບທາງການເງິນ		7,495	22,725
ຕົ້ນທຶນທາງການເງິນ	20	(368,507,794)	(691,719,692)
ຂາດທຶນ ກ່ອນ ອາກອນ		**(2,895,659,048)**	**(5,047,302,544)**
ລາຍຮັບອື່ນໆ		2,277,267	-
ລາຍຈ່າຍອາກອນກຳໄລ	21	(607,186)	-
ຂາດທຶນສຸດທິ ຫຼັງອາກອນພາຍໃນປີ		**(2,893,988,967)**	**(5,047,302,544-**

ທ່ານ ຫລິ ຣ້າວ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈີ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພະຈິກ 2026

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບລວມກິດຈະການ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ ກີບ	*ສ່ວນເພີ່ມມູນຄ່າຮຸ້ນ ກີບ*	*ຄ້ຳສຳຮອງຕາມລະບຽບການ ກີບ*	*ຄ້ຳສຳຮອງເພື່ອຂະຫຍາຍອາຄານ ກີບ*	*ຂາດທຶນສະສົມ ກີບ*	*ລວມທັງໝົດ ກີບ*
ນະວັນທີ 1 ກໍລະກົດ 2025	20,002,000,000	18,385,975,511	7,704,052,546	18,549,465,596	(93,649,957,734)	(29,008,464,081)
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(5,047,302,544)	(5,047,302,544)
ນະວັນ ທີ 30 ກັນຍາ 2025	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(98,697,260,278)**	**(34,055,766,625)**
ນະວັນທີ 1 ກໍລະກົດ 2026	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	(128,939,618,436)	(64,298,124,783)
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(2,893,988,967)	(2,893,988,967)
ນະວັນທີ 30 ກັນຍາ 2026	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(131,833,607,403)**	**(67,192,113,750)**

ທ່ານ ຫລິວ ຮ້າວ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈີ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພະຈິກ 2026

ໃບລາຍງານກະແສເງິນສົດແບບລວມກິດຈະການ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026

	ບົດອະທິບາຍເລກທີ	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ **30** ກັນຍາ **2026** ກີບ*	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2025 **ກີບ***
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(2,893,988,967)**	**(5,047,302,544)**
ດັດແກ້ສຳລັບ:			**-**
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	88,396,617	161,368,797
ສະສາງຊັບສິນ, ອາຄານ ແລະ ອຸປະກອນ		-	-
ເກັບຄືນເງິນແຮສຳລັບເຄື່ອງໃນສາງ		-	-
ເກັບຄືນເງິນແຮສຳລັບໜີ້ທວງຍາກ		-	-
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(1,180,590)	(1,686,533)
ກຳໄລຈາກການຂາຍຊັບສິນ		(416,727,273)	(210,646,794)
ລາຍຈ່າຍດອກເບ້ຍ		368,018,303	370,284,709
ການດັດແກ້ທຶນໝຸນວຽນ:			
ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ		(15,700,000)	1,461,993,205
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(4,108,551,700)	(35,945,893,733)
(ເພີ່ມຂຶ້ນ)/ຫຼຸດລົງຂອງເຄື່ອງໃນສາງ		(5,403,532,628)	11,361,785,790
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ພາກສ່ວນທີ່ກ່ຽວຂ້ອງ		10,714,302,878	22,523,776,303
ລາຍຮັບດອກເບ້ຍ		7,495	*22,725*
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳເນີນງານ		**(1,668,955,865)**	***(5,326,298,075)***
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(196,600,800)	(359,119,000)
ເງິນສົດຈາກການຂາຍຊັບສົມບັດຄົງທີ່		458,400,000	210,646,794
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		-	-
ຊັບສິນພວມກໍ່ສ້າງ		-	-
ກະແສເງິນສົດສຸດທິຈາກກິດຈະກຳການ ລົງທຶນ		***261,799,200***	***(148,472,206)***

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແບບລວມກິດຈະການ (ກ່ອນການກວດສອບ)
ນະວັນທີ ແລະ ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 202*6*

	ບົດອະທິບາຍ ເລກທີ	*ສຳລັບໄລຍະສາມເດືອນ ທີ່ສິ້ນສຸດ **ວັນທີ 30** ກັນຍາ **2026** ກີບ*	*ສຳລັບໄລຍະສາມເດືອນ ທີ່ສິ້ນສຸດ ວັນທີ 30 ກັນຍາ 2025 **ກີບ***
ກິດຈະກຳການເງິນ			
ເພີ່ມເງິນກູ້ຢືມ		639,209,972	2,938,293,546
ຈ່າຍເງິນກູ້ຢືມ		*(15,112,900)*	**-**
ກະແສເງິນສົດສຸດທິຈາກກິດຈະກຳການເງິນ		***624,097,072***	***2,938,293,546***
ເງິນສົດຫຼຸດລົງສຸດທິ		(783,059,592)	(2,536,476,735)
ເງິນສົດເບື້ອງໃນໄລຍະ		1,205,866,955	4,381,808,267
ຜົນກະທົບຈາກຄວາມຜັນຜວນຂອງອັດຕາແລກປ່ຽນ		**1,180,590**	**1,180,590**
ເງິນສົດໃນທ້າຍປີ	**10**	**423,987,953**	**1,846,512,122**

_____
ທ່ານ ຫລິວ ຮ້າວ
ຜູ້ອຳນວຍການໃຫຍ່

_____
ທ່ານ ຈ່າງ ຈິ້ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພະຈິກ 2026

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີແບບລວມກິດຈະການ (ກ່ອນການກວດສອບ)
ນະວັນທີ ແລະ ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2025

1. ຂໍ້ມູນບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊີມັ່ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໃບຢັ້ງຢືນການສະເໜີຂາຍຮຸ້ນຕໍ່ສາທາລະນະຄັ້ງທຳອິດເລກທີ 0008/ຕລຊລ ອອກ ໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະໂດຍມີຮຸ້ນຂອງ ບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດ ຫຼັກຊັບລາວ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດ ໄດ້ປ່ຽນຈາກ ການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັ່ງ ແລະ ຜະລິດຕະພັນຊີມັ່ງອື່ນໆທີ່ກ່ຽວຂ້ອງມາເປັນ ການໃຫ້ບໍລິການ ການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ.

ວັນທີ 30 ຕຸລາ 2023, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດເລກທີ 3330/ຈທວ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ່ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັ່ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 30 ກັນຍາ 2026, ບໍລິສັດມີພະນັກງານ **46** ຄົນ (31 ທັນວາ 2024: ພະນັກງານ 72 ຄົນ)

1. **ຂໍ້ມູນບໍລິສັດ (ຕໍ່)**

ໂຄງສ້າງການຈັດຕັ້ງຂອງບໍລິສັດ

ນະວັນທີ 30 ກັນຍາ 2026, ບໍລິສັດມີບໍລິສັດໃນເຄືອ **9** ບໍລິສັດຍ່ອຍທີ່ມີຂໍ້ມູນທາງການເງິນດັ່ງນີ້:

ຊື່ບໍລິສັດ	*ໃບທະບຽນວິສາຫະກິດເລກທີ.*	*ປະເພດທຸລະກິດ*	*% ເປັນເຈົ້າຂອງໂດຍ LCTC*
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	ເລກທີ 2118/ຈທອ ລົງວັນທີ 17 ມິຖຸນາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການຈຳໜ່າຍພືດສະໜຸນໄພເພື່ອສົ່ງອອກ, ປູກເພື່ອຂາຍພາຍໃນ ແລະ ສົ່ງອອກ	100%
ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ	ເລກທີ 2434/ຈທອ ລົງວັນທີ 05 ກໍລະກົດ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການບໍລິການທີ່ປຶກສາດ້ານການກໍ່ສ້າງ	100%
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	ເລກທີ 2422/ຈທອ ລົງວັນທີ 10 ສິງຫາ 2023 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ວັດສະດຸການກໍ່ສ້າງ ແລະ ເຄື່ອງມືອຸປະກອນ	100%
ບໍລິສັດ ສະຖາປັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 3113/ຈທອ ລົງວັນທີ 26 ກັນຍາ 2023 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການອອກແບບອາຄານ, ການອອກແບບການທ່ອງທ່ຽວ, ອອກແບບ ແລະ ກໍ່ສ້າງວຽກງານສາທາລະນະ	100%
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	ເລກທີ 0414/ຈທອ ລົງວັນທີ 01 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການຜະລິດສື່ບັນເທີງ, ຮູບເງົາ ແລະ ການໂຄສະນາ	100%
ບໍລິສັດ ພັດທະນາຊັບພະຍາກອນແຮ່ລາວ ຈຳກັດ	ເລກທີ 0767/ຈທອ ລົງວັນທີ 29 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ຂຸດຄົ້ນ ແລະ ສຳຫຼວດພື້ນທີ່ຂຸດຄົ້ນບໍ່ແຮ່	100%
ບໍລິສັດ ສະຖາປັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 1495/ຈທອ ລົງວັນທີ 06 ພຶດສະພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການສຳຫຼວດ ແລະ ການອອກແບບອາຄານ	100%
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ **(**ລາວ**)** ຈ□ຳກັດຜູ້ດຽວ	ເລກທີ 1485/ຈທອ ລົງວັນທີ 06 ພຶດສະພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການທີ່ປຶກສາທາງດ້ານການສຶກສາ	100%
ບໍລິສັດ ເຄື່ອງຈັກ ແລະ ອຸປະກອນວິສະວະກຳ ຈຳກັດ	ເລກທີ 016090/ຈທອ ລົງວັນທີ 22 ພຶດສະພາ 2025 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ.	ອຸປະກອນເຄື່ອງຈັກວິສະວະກຳ	100%

2. ພື້ນຖານຂອງ ການ ກະກຽມ

ອີງຕາມກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາໜ່ວຍງານສາທາລະນະ ປະໂຫຍດ ລວມທັງບໍລິສັດຈົດທະບຽນຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ (IFRS") ໃນການກະກຽມ ລາຍງານ ການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ. ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ຫົວໜ່ວຍຖືຜົນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ເລື່ອນເວລາ ການສະໝັກ IFRS ໄປຈົນ ເຖິງວັນທີ 1 ມັງກອນ 2026.

ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026, ກຸ່ມບໍລິສັດ ແມ່ນໄດ້ກະກຽມເອກະສານລາຍງານການເງິນ ແບບລວມກິດຈະການໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານ ລາຍງານການເງິນແບບລວມກິດຈະການ. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນ ແບບລວມກິດຈະການ, ຜົນຂອງການດຳເນີນງານແບບລວມກິດຈະການ ແລະ ກະແສເງິນສົດແບບລວມກິດຈະການຂອງ ກຸ່ມບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບທົ່ວໄປ.

ເອກະສານລາຍງານການເງິນແບບລວມກິດຈະການຂອງກຸ່ມບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນແບບລວມກິດຈະການສະບັບນີ້ ແມ່ນຖືກລາຍງານເປັນສະກຸນເງິນກີບລາວ (ກີບ) ເຊິ່ງເປັນສະ ກຸນເງິນຫຼັກທີ່ນຳໃຊ້ໃນການເຮັດທຸລະກຳ ແລະ ຊຳລະສະສາງ ຂອງກຸ່ມບໍລິສັດ.

ພື້ນຖານການລວມກິດຈະການ

ເອກະສານລາຍງານການເງິນແບບລວມກິດຈະການມີລາຍງານການເງິນຂອງກຸ່ມບໍລິສັດ ແລະ ບໍລິສັດໃນເຄືອສຳລັບ ໄລຍະສາມເດືອນຕົ້ນປີທີ່ປີສິ້ນສຸດ ວັນທີ 30 ກັນຍາ 2026.
ບໍລິສັດໃນເຄືອແມ່ນໄດ້ຖືກສັງລວມຂໍ້ມູນທັງໝົດນັບຈາກມື້ທີ່ໄດ້ມາຂອງຂໍ້ມູນ, ເປັນມື້ທີ່ກຸ່ມບໍລິສັດຢູ່ພາຍໃຕ້ການຄວບຄຸມ ແລະ ສືບຕໍ່ສັງລວມຈົນເຖິງມື້ທີ່ສິ້ນສຸດການຄວບຄຸມ.
ເອກະສານລາຍງານການເງິນຂອງບໍລິສັດໃນເຄືອແມ່ນຖືກກະກຽມພາຍໃຕ້ປີການບັນຊີອັນດຽວກັນກັບບໍລິສັດແມ່, ໂດຍການ ນຳໃຊ້ນະໂຍບາຍການບັນຊີທີ່ສອດຄ່ອງກັນ.
ຍອດເຫຼືອພາຍໃນກຸ່ມທັງໝົດ, ລາຍຮັບ ແລະ ລາຍຈ່າຍ ແລະ ກຳໄລ ຫຼື ຂາດທຶນທີ່ຍັງບໍ່ທັນເກີດຂຶ້ນຈິງທີ່ມີຜົນຈາກລາຍ ການທີ່ກ່ຽວຂ້ອງກັນພາຍໃນກຸ່ມແມ່ນຈະຖືກຕັດອອກທັງໝົດ.

2. ພື້ນຖານຂອງ ການ ກະກຽມ (ຕໍ່)

ພື້ນຖານການລວມກິດຈະການ (ຕໍ່)

ບໍລິສັດທີ່ບໍ່ໄດ້ຖືກຄວບຄຸມໂດຍບໍລິສັດແມ່ແມ່ນຈະນຳສະເໜີຜົນກຳໄລ/ຂາດທຶນ ແລະ ຊັບສິນສຸດທິທີ່ບໍ່ໄດ້ຖືຄອງໂດຍກຸ່ມບໍລິສັດ ແລະ ຖືກນຳສະເໜີແຍກຕ່າງຫາກໃນໃບລາຍງານຜົນການດຳເນີນງານການງິປແບບລວມກິດຈະການ ແລະ ທຶນໃນໃບລາຍງານຖານະການເງິນການງິປແບບລວມກິດຈະການ, ແຍກຈາກສ່ວນຂອງຜູ້ຖືຮຸ້ນຂອງບໍລິສັດແມ່.
ຜົນກະທົບຈາກສ່ວນປ່ຽນແປງຄວາມເປັນເຈົ້າຂອງໃນບໍລິສັດໃນເຄືອໂດຍທີ່ບໍ່ໄດ້ສູນເສຍການຄວບຄຸມແມ່ນຈະຖືກບັນທຶກເປັນທຸລະກຳຂອງກິດຈະການ.

ຂໍ້ສົມມຸດຖານກ່ຽວກັບຄວາມສົບເນື່ອງຂອງການດຳເນີນທຸລະກິດ

ກຸ່ມບໍລິສັດໄດ້ຂາດທຶນສຸດທິມູນຄ່າ 2.89 ຕື້ກີບ ສຳລັບໄລຍະ 9 ເດືອນສິ້ນສຸດໃນວັນທີ 30 ກັນຍາ 2026. ນາຮອດ ປັດຈຸບັນ, ກຸ່ມບໍລິສັດໄດ້ຂາດທຶນສະສົມ 131.83 ຕື້ກວ່າກີບ ເຊິ່ງເກີນທຶນປະກອບປະມານທັງໝົດ 111.83 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງກຸ່ມບໍລິສັດກໍ່ມີເກີນກວ່າ 90.67 ຕື້ກວ່າກີບ. ໃນວັນທີ 25 ສິງຫາ 2020, ກຸ່ມບໍລິສັດໄດ້ອອກແຈ້ງ ການສະບັບເລກທີ 202/LCC ກ່ຽວກັບການຢຸດການຜະລິດທັງໝົດຊົ່ວຄາວຈົນກວ່າຈະມີແຈ້ງ ການເພີ່ມເຕີມ. ກຸ່ມບໍລິສັດ ໄດ້ປັບປຸງແກ້ໄຂການດຳເນີນທຸລະກິດຫຼັກໃຫ້ສອດຄ່ອງກັບໃບອະນຸຍາດການລົງທຶນສະບັບ ເລກທີ 119.2023/MPI ລົງ ວັນທີ 02 ພຶດສະພາ 2023 ເຊິ່ງກະຊວງແຜນການ ແລະ ການລົງທຶນອອກໃຫ້. ການດຳເນີນທຸລະກິດຫຼັກຂອງກຸ່ມບໍລິສັດ ປ່ຽນຈາກການຜະລິດ, ຂາຍຍົກ ແລະ ຂາຍຍ່ອຍຊີມັງ ແລະ ຜະລິດຕະພັນຊີມັງ ທີ່ກ່ຽວຂ້ອງເພື່ອໃຫ້ບໍລິການດ້ານການທ່ອງ ທ່ຽວ (ຂາເຂົ້າ-ຂາອອກ) ແລະ ການກໍ່ສ້າງຄອນໂດມີນຽມເພື່ອຂາຍ. ເງື່ອນໄຂເຫຼົ່ານີ້ຊີ້ໃຫ້ເຫັນເຖິງຄວາມບໍ່ແນ່ນອນທີ່ສຳ ຄັນທີ່ອາດຈະເຮັດໃຫ້ເກີດຄວາມສົງໃສຢ່າງຫຼວງຫຼາຍ ກ່ຽວກັບຄວາມ ສາມາດຂອງການສືບເນື່ອງຂອງການດຳເນີນທຸລະກິດ.

ຄະນະຜູ້ບໍລິຫານຂອງ ກຸ່ມບໍລິສັດໄດ້ກະກຽມການຄາດຄະເນກະແສເງິນສົດເພື່ອສະໜັບສະໜຸນການຊຳລະສະສາງ ແລະ ແຜນການດຳເນີນງານ, ຕົ້ນຕໍແມ່ນອີງໃສ່ຄວາມຄາດຫວັງຂອງພວກເຂົາທີ່ຈະໄດ້ຮັບການສະໜັບສະໜຸນທາງດ້ານການເງິນ ຈາກຜູ້ຖືຫຸ້ນແລະຄວາມສາມາດໃນການຂາຍຊັບສິນສິນຄ້າຄົງຄັງ. ຜູ້ຈັດການຂອງກຸ່ມໄດ້ຮັບຈົດໝາຍສະໜັບສະໜຸນທາງ ດ້ານການເງິນຈາກບໍລິສັດ Yunnan Hengshi Chengrui Holdings Co., Ltd., ຜູ້ຖືຫຸ້ນລາຍໃຫຍ່ຂອງກຸ່ມບໍລິສັດ, ເຊິ່ງໄດ້ກຳນົດຂໍ້ຕົກລົງຂອງຕົນໃນການສະໜອງການຊ່ວຍເຫຼືອທາງດ້ານການເງິນທີ່ຈຳເປັນທັງໝົດເພື່ອຮັບປະກັນວ່າກຸ່ມບໍ ລິສັດຈະມີຊັບພະຍາກອນພຽງພໍເພື່ອຊຳລະໜີ້ສິນຂອງຕົນເມື່ອພວກເຂົາຕົກຄ້າງໃນປີການເງິນຕໍ່ໄປໂດຍບໍ່ມີການຜ່ອນຜັນ.
ບົນພື້ນຖານນີ້, ຄະນະອຳນວຍການຂອງກຸ່ມບໍລິສັດຍັງຕ້ອງພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານການ ເງິນ ການງິປແບບລວມກິດຈະການຂອງກຸ່ມບໍລິສັດບົນພື້ນຖານຄວາມສົບເນື່ອງຂອງການດຳເນີນທຸລະກິດ.

ດັ່ງນັ້ນ, ເອກະສານລາຍງານການເງິນລວມບໍ່ໄດ້ລວມເອົາການດັດແກ້ທີ່ອາດຈະມີຄວາມຈຳເປັນຖ້າຫາກວ່າກຸ່ມບໍລິສັດບໍ່ສາ ມາດສືບເນື່ອງຂອງການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງກຸ່ມບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ**

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຍຫ້ຽນສະສົມ. ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍກຸ່ມບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນ ໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບ ການບຳລຸງຮັກສາ ແລະ ການສ້ອມແປງ ແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານກາງປີແບບລວມກິດຈະການ.
ເມື່ອລາຍການຂອງຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຍຫ້ຽນສະສົມ ແມ່ນຈະຖືກ ຕັດອອກຈາກໃບລາຍງານຖານະການເງິນກາງປີແບບລວມກິດຈະການ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງແມ່ນ ຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານກາງປີແບບລວມກິດ ຈະການຕາມລຳດັບ.
ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.
ຊັບສິນ, ອາຄານ ແລະ ອຸປະກອນທີ່ຖືກຫັກຄ່າຫຼ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີຈົນກວ່າຈະບໍ່ ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼ້ຍຫຼ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກາງປີແບບລວມກິດ ຈະການອີກ.

ຄ່າ ຫຼ້ຍຫ້ຽນ

ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະເໝີຕົ້ວຕາມອາຍຸການນຳໃຊ້ຂອງຊັບສິນ ແຕ່ ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ອື່ນໆ	10 ປີ

ອາຍຸການໃຊ້ງານຂອງຊັບສິນເຊົ່າພວມປັບປຸງ ແມ່ນຖືກກຳນົດໂດຍການຄາດການຄະນະອຳນວຍການກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.
ການຫັກຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມ ຫຼື ສະສາງອອກພາຍໃນປີ ແມ່ນຄິດໄລ່ອີງຕາມສັດສ່ວນ ໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສາງອອກຕົວຈິງ. ບໍ່ມີການຫັກຄ່າຫຼ້ຍຫ້ຽນສຳລັບຊັບສິນ ພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສົມບັດຖາວອນທີ່ບໍ່ມີຕົວຕົນ

ຊັບສົມບັດຖາວອນທີ່ບໍ່ມີຕົວຕົນ ປະກອບດ້ວຍ ຊອບແວຄອມພິວເຕີ ແລະ ສິດນຳໃຊ້ທີ່ດິນ. ຕົ້ນທຶນຂອງຊອບແວປະກອບດ້ວຍ ລາຄາຊື້ ບວກໃຫ້ກັບຕົ້ນທຶນໂດຍກົງຕ່າງໆທີ່ຈະເຮັດໃຫ້ຊອບແວສາມາດເຮັດວຽກໄດ້ຕາມຈຸດປະສົງການໃຊ້ງານ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ຕໍ່)

ສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນພວມກໍ່ສ້າງ

ຊັບສິນພວມກໍ່ສ້າງແມ່ນສະແດງເຖິງຄ່າໃຊ້ຈ່າຍຂອງການຊື້ຊັບສິນໃຫມ່ທີ່ຍັງບໍ່ທັນໄດ້ຕິດຕັ້ງຢ່າງເຕັມທີ່ ຫຼື ຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ຍັງບໍ່ທັນໄດ້ສຳເລັດສົມບຸນ. ຊັບສິນພວມກໍ່ສ້າງແມ່ນລະບຸໄວ້ໃນຄ່າໃຊ້ຈ່າຍ, ເຊິ່ງລວມເຖິງຄ່າໃຊ້ຈ່າຍທີ່ຈຳເປັນທັງຫມົດໃນການກໍ່ສ້າງ, ສ້ອມແປງ, ຂະຫຍາຍ, ຫຼື ປັບປຸງໂຄງການໃຫມ່ດ້ວຍເຕັກໂນໂລຢີ, ເຊັ່ນ: ຄ່າກໍ່ສ້າງ, ຄ່າເຄື່ອງມື ແລະ ອຸປະກອນ, ຄ່າໃຊ້ຈ່າຍໃນການຄຸ້ມຄອງໂຄງການ, ຄ່າໃຊ້ຈ່າຍທີ່ປຶກສາການກໍ່ສ້າງ, ແລະ ຄ່າໃຊ້ຈ່າຍໃນການກູ້ຢືມທີ່ສາມາດຫັກລົບໄດ້.

ຊັບສິນພວມກໍ່ສ້າງຈະຖືກໂອນເຂົ້າບັນຊີຊັບສິນຄົງທີ່ທີ່ເຫມາະສົມເມື່ອຊັບສິນເຫຼົ່ານີ້ຖືກຕິດຕັ້ງຢ່າງເຕັມສ່ວນ ຫຼື ໂຄງການກໍ່ສ້າງສຳເລັດສົມບຸນ, ແລະ ຄ່າຫຼ້ຽຫ້ຽນຂອງຊັບສິນເຫຼົ່ານີ້ຈະເລີ່ມຕົ້ນເມື່ອຊັບສິນພ້ອມສຳລັບການນຳໃຊ້ທີ່ມີຈຸດປະສົງ.

ຄ່າໃຊ້ຈ່າຍໃນການກໍ່ສ້າງຖືກຮັບຮູ້ເປັນລາຍຈ່າຍໃນເວລາທີ່ຄ່າໃຊ້ຈ່າຍດັ່ງກ່າວບໍ່ໄດ້ເປັນໄປຕາມເງື່ອນໄຂທີ່ຈະຮັບຮູ້ເປັນຊັບສິນຄົງທີ່.

ສັນຍາເຊົ່າ

ໃນການກຳນົດຕົກລົງເປັນສັນຍາເຊົ່າ, ຫຼື ປະກອບດ້ວຍສັນຍາເຊົ່ານັ້ນ, ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນສະເພາະ ແລະ ການຕົກລົງທີ່ບົ່ງບອກເຖິງສິດໃນການໃຊ້ຊັບສິນ.

ກຸ່ມບໍລິສັດໃນຖານະຜູ້ເຊົ່າ

ສັນຍາເຊົ່າ, ທີ່ຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງຄວາມເປັນເຈົ້າຂອງລາຍການທີ່ເຊົ່າ ບໍ່ໄດ້ໂອນໄປຫາກຸ່ມບໍລິສັດເປັນສາລະສຳຄັນຄືສັນຍາເຊົ່າດຳເນີນງານ.
ເງິນທີ່ຈ່າຍຕາມສັນຍາເຊົ່າດຳເນີນງານຖືກຮັບຮູ້ເປັນລາຍຈ່າຍຢູ່ໃນໃບລາຍງານຜົນການດຳເນີນງານໂດຍວິທີເສັ້ນຊື່ຕະຫຼອດອາຍຸການສັນຍາເຊົ່າ. ໜີ້ຕ້ອງສົ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປະຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕີລາຄາຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ, ວັດຖຸສິ້ນເປືອງ, ເຄື່ອງມື ແລະ ອຸປະກອນ	-	ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	-	ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

ຊັບສິນໃນສາງ

ຊັບສິນທີ່ຊື້ເຂົ້າມາ ແລະ ກຳລັງກໍ່ສ້າງເພື່ອຂາຍໃນການດຳເນີນທຸລະກິດທົ່ວໄປ, ແທນທີ່ຈະຖືໄວ້ເພື່ອເຊົ່າ ຫຼື ເປັນການເພີ່ມມູນຄ່າທຶນ, ຖືເປັນຊັບສິນໃນສາງ ແລະ ຖືກວັດແທກດ້ວຍຕົ້ນທຶນທີ່ຕ່ຳກວ່າ ແລະ ມູນຄ່າສຸດທິທີ່ອາດຈະໄດ້ຮັບ (NRV).

ໂດຍສະເພາະ, ນີ້ແມ່ນຊັບສິນທີ່ຢູ່ອາໄສທີ່ບໍລິສັດພັດທະນາ ແລະ ຕັ້ງໃຈຈະຂາຍກ່ອນ, ຫຼື ເມື່ອສຳເລັດການພັດທະນາ.

ຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາຊັບສິນແຕ່ລະຢ່າງມາຕຳແໜ່ງ ແລະ ເງື່ອນໄຂທີ່ເໝາະສົມ ປະກອບມີດັ່ງນີ້:

- ຈຳນວນເງິນທີ່ຈ່າຍໃຫ້ຜູ້ຮັບເໝົາເພື່ອການພັດທະນາ
- ຄ່າໃຊ້ຈ່າຍໃນການວາງແຜນ ແລະ ການອອກແບບ, ຄ່າໃຊ້ຈ່າຍໃນການກະກຽມສະຖານທີ່, ຄ່າທຳນຽມດ້ານວິຊາຊີບສຳລັບການບໍລິການທາງດ້ານກົດໝາຍ, ຄ່າໃຊ້ຈ່າຍໃນການພັດທະນາ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ

ມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ແມ່ນການຄາດຄະເນລາຄາຂາຍໃນການດຳເນີນທຸລະກິດທົ່ວໄປ, ໂດຍອີງໃສ່ລາຄາຕະຫຼາດໃນວັນທີ່ລາຍງານ, ຫັກດ້ວຍຕົ້ນທຶນທີ່ຄາດຄະເນໃນການດຳເນີນງານໃຫ້ສຳເລັດ ແລະ ຄ່າໃຊ້ຈ່າຍທີ່ຄາດຄະເນທີ່ຈຳເປັນທີ່ ໃຊ້ເພື່ອການຂາຍ.

ເມື່ອຊັບສິນໃນສາງຖືກຂາຍ, ມູນຄ່າຕາມບັນຊີຂອງຊັບສິນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາທີ່ລາຍຮັບທີ່ກ່ຽວຂ້ອງຖືກຮັບຮູ້. ມູນຄ່າຕາມບັນຊີຂອງຊັບສິນໃນສາງທີ່ຮັບຮູ້ໃນກຳໄລ ຫຼື ຂາດທຶນ ແມ່ນຖືກກຳນົດໂດຍອ້າງອີງໃສ່ຄ່າໃຊ້ຈ່າຍທີ່ ກ່ຽວຂ້ອງ ໂດຍກົງຂອງຊັບສິນທີ່ຂາຍ ແລະ ການຈັດສັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອື່ນໆໂດຍອີງໃສ່ຂະໜາດທີ່ກ່ຽວຂ້ອງຂອງຊັບ ສິນທີ່ຂາຍ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ຊັບສິນໃນສາງ (ຕໍ່)

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫຼັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃບລາຍງານຖານະການເງິນກາງປີແບບລວມກິດຈະການ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນບັນທຶກເຂົ້າເປັນລາຍຈ່າຍການດຳເນີນງານສຳລັບເງິນແຮທີ່ເພີ່ມຂຶ້ນ ແລະ ໃນລາຍຮັບການດຳເນີນງານສຳລັບເກັບຄືນເງິນແຮ ທີ່ສະແດງໃນໃບລາຍງານຜົນການດຳເນີນງານແບບລວມກິດຈະການ.

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ກຸ່ມບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ການກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະເກີນກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ **1** ປີ	30%
1 ປີ ຫາ **2** ປີ	50%
ຫຼາຍກວ່າ **2** ປີ	100%

ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງເງິນແຮໜີ້ທວງຍາກໄດ້ຖືກຮັບຮູ້ເປັນ “ລາຍຈ່າຍຈາກການດຳເນີນງານອື່ນໆ” ສຳລັບລາຍຈ່າຍເງິນແຮ ແລະ “ລາຍຮັບຈາກການດຳເນີນງານອື່ນໆ” ສຳລັບເກັບຄືນລ່າຍຈ່າຍເງິນແຮຢູ່ໃນໃບລາຍງານຜົນການດຳເນີນງານແບບລວມກິດຈະການ.

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນແບບລວມກິດຈະການເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນ ຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງກຸ່ມບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນແບບລວມກິດຈະການ.

ຄັງສຳຮອງມູນຄ່າຮຸ້ນ

ມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ນະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງສຳຮອງຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງແມ່ນສິບເປີເຊັນ (10%) ຂອງ ກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງສຳຮອງດັ່ງກ່າວຫາກມີເງິນສະສົມ ໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ກຸ່ມບໍລິສັດອາດຈະໂຈະການຫັກກຳໄລເຂົ້າຄັງສ□າຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດ ຈາກເຈົ້າຂອງບໍລິສັດ.

ຄັງສຳຮອງອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍອາຄານ ເຊິ່ງຫັກຈາກກຳໄລສະສົມ ຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງກຸ່ມບໍລິສັດ ລົງວັນທີ 15 ທັນວາ ປີ 1998. ຈຳນວນເງິນທີ່ເໝາະສົມ ຈະຖືກກຳນົດໂດຍສະພາບໍລິຫານຂອງກຸ່ມບໍລິສັດໃນແຕ່ລະປີ.

ຄັງສຳຮອງຂອງປີການບັນຊີປະຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນແບບລວມກິດຈະການຖືກລາຍງານເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ກຸ່ມບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນແບບລວມກິດຈະການ. ກຳໄລ ແລະ ຂາດທຶນທັງໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານແບບລວມກິດຈະການ.

ການຮັບຮູ້ລາຍຮັບ

ລາຍຮັບຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍກຸ່ມບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຖືກຮັບຮູ້ເມື່ອຄວາມສ່ຽງອັນເປັນສາລະສຳຄັນ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

ອາກອນ

ອາກອນກຳໄລແມ່ນ ການຄາດຄະເນໜີ້ຕ້ອງສົ່ງອາກອນຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກ□າໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນແບບລວມກິດຈະການ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກ□າໄລຂອງປີທີ່ຜ່ານມາ.

ໜີ້ອາກອນຕ້ອງສົ່ງອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນທີ່ຕ້ອງຈ່າຍ ໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.
ອາກອນລາຍໄດ້ສ່ວນບຸກຄົນ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.
ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ຄູ່ສັນຍາຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ໃນກໍລະນີທີ່ບໍ່ມີລາຄາຕະຫຼາດ ໃນລາຄາທີ່ຕົກລົງຕາມສັນຍາ.

ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍທີ່ກ່ຽວຂ້ອງກັບໂຮງງານທີ່ຢຸດຊົ່ວຄາວຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນການດຳເນີນງານອື່ນ.

ຂໍ້ມູນສ່ວນຕ່າງໆ

ສ່ວນງານເປັນອົງປະກອບທີ່ກຳນົດແຍກອອກຕ່າງຫາກໂດຍກຸ່ມບໍລິສັດເຊິ່ງປະກອບທຸລະກິດການສະໜອງສິນຄ້າ ຫຼື ການບໍລິ ການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການສະໜອງສິນຄ້າ ຫຼື ການບໍລິການໃນສະພາບແວດລ້ອມ ທາງເສດຖະກິດສະເພາະ (ສ່ວນງານທາງພູມສາດ), ທີ່ມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງໄປຈາກນັ້ນ ຂອງສ່ວນອື່ນໆ.

ກິດຈະກຳຫຼັກຂອງກຸ່ມບໍລິສັດຕາມໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ການບໍລິການທາງດ້ານການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ. ນອກຈາກນີ້, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງກຸ່ມບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການ ຂອງກຸ່ມບໍລິສັດທີ່ສະໜອງ ຫຼື ສະຖານທີ່ທີ່ກຸ່ມບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງກຸ່ມບໍລິສັດແມ່ນ ຖືວ່າມີພຽງແຕ່ສ່ວນດຽວສຳລັບສ່ວນທຸລະກິດ ແລະ ສ່ວນພູມສາດ ແລະ ດັ່ງນັ້ນຈຶ່ງບໍ່ຈຳເປັນຕ້ອງນຳສະເໜີຂໍ້ມູນຕາມ ສ່ວນງານ.

4. **ຊັບສິນ, ອາຄານ ແລະ ອຸປະກອນ**

	ອາຄານ ແລະ ສິ່ງປຸກສ້າງ ກີບ	*ເຄື່ອງຈັກ ແລະ ອຸປະກອນ ກີບ*	*ພາຫະນະຂົນສົ່ງ ກີບ*	*ການປັບປຸງສິດ ໃນການເຊົ່າ ກີບ*	*ເຄື່ອງໃຊ້ຫ້ອງການ ກີບ*	*ລວມ ກີບ*
ຕົ້ນທຶນ						
ນະວັນທີ 1 ກໍລະກົດ 2026	134,171,239,559	518,812,000	8,890,562,731	-	1,339,797,670	144,920,411,960
ຊື້ເຂົ້າເພີ່ມ	-	-	196,600,800	-	-	196,600,800
ສະສາງອອກ	-	-	(951,345,900)	-	-	(951,345,900)
ນະວັນທີ 30 ກັນຍາ 2026	**134,171,239,559**	**518,812,000**	**8,135,817,631**	**-**	**1,339,797,670**	**144,165,666,860**
ຄ່າຫຼຸ້ຍຫ້ຽນສະສົມ						
ນະວັນທີ 1 ກໍລະກົດ 2026	134,171,239,559	95,093,270	8,556,418,814	-	1,149,914,190	143,972,665,833
ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ	-	25,940,601	38,394,750	-	15,941,058	80,276,409
ສະສາງອອກ	-	-	(951,345,900)	-	-	(951,345,900)
ດັດແກ້ເກັບຄືນ	-	-	-	-	-	-
ນະວັນທີ 30 ກັນຍາ 2026	**134,171,239,559**	**121,033,871**	**7,643,467,664**		**1,165,855,248**	**143,101,596,342**
ມູນຄ່າສຸດທິຕາມບັນຊີ	-					
ນະວັນທີ 1 ກໍລະກົດ 2026	**-**	**423,718,730**	**334,143,917**	**-**	**189,883,480**	**947,746,127**
ນະວັນທີ 30 ກັນຍາ 2026		**397,778,129**	**492,349,967**	**-**	**173,942,422**	**1,064,070,518**

5. ຊັບສົມບັດຄົງທີ່ບໍ່ມີຕົວຕົນ

	ຊອບແວ ກີບ	*ສິດນຳໃຊ້ທີ່ດິນທີ່ ບໍ່ມີກຳນົດ ກີບ*	*ລວມ ກີບ*
ຕົ້ນທຶນ			
ນະວັນທີ 1 ກໍລະກົດ 2026	332,871,478	3,655,353,775	3,988,225,253
ຊື້ເຂົ້າເພີ່ມ	-	-	-
ນະວັນທີ 30 ກັນຍາ 2026	332,871,478	3,655,353,775	3,988,225,253
ຄ່າຫຼຸ້ຍຫ້ຽນສະສົມ			
ນະວັນທີ 1 ກໍລະກົດ 2026	59,386,055	-	59,386,055
ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ	5,758,835	-	5,758,835
ນະວັນທີ 30 ກັນຍາ 2026	65,144,890	-	65,144,890
ມູນຄ່າສຸດທິຕາມບັນຊີ			
ນະວັນທີ 1 ກໍລະກົດ 2026	**273,485,424**	**3,655,353,775**	**3,928,839,199**
ນະວັນທີ 30 ກັນຍາ 2026	**267,726,588**	**3,655,353,775**	**3,923,080,363**

6. ຊັບສິນພວມກໍ່ສ້າງ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,966,361,212	5,966,361,212
ໂຄງການຕຶກ 21 (*)	10,516,342,383	11,796,561,853
ໂຄງການກໍ່ສ້າງເຮືອນພັກ	5,806,728,535	5,792,347,242
ໂຄງການກໍ່ສ້າງໝອງບອນ	52,484,783	52,484,784
ໂຄງການກໍ່ສ້າງລີສອດ-ໂຮງແຮມ	42,118,600	42,118,600
ໂຄງການກໍ່ສ້າງຫ້ອງການບໍ່ແຮ່	36,918,050	36,918,050
ໂຄງການອາພາດເມັ້ນພະນັກງານ	1,765,241,497	1,765,241,497
ໂຄງການອັ່ງວຽງ	432,987,473	423,292,224
	24,619,182,533	**25,875,325,462**
ເງິນແຮສຳລັບຊັບສິນພວມກໍ່ສ້າງ	**(5,966,361,211)**	(5,966,361,212)
	18,652,821,322	**19,908,964,250**

(*) ການນຳສະເໜີນີ້ແມ່ນສຳລັບຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ກ່ຽວຂ້ອງກັບການພັດທະນາອາຄານຄອນໂດມິນຽມ (ຕຶກ 21") ທີ່ຕັ້ງຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ມາຮອດວັນທີ 30 ກັນຍາ 2025, ຄະນະບໍລິຫານງານຂອງກຸ່ມໄດ້ກຳນົດຈຸດປະສົງການນຳໃຊ້ອາຄານ 21: ຊັ້ນທີ 1 ຫາ ຊັ້ນ 3 ຈະຖືກກຳນົດໃຫ້ເປັນຫ້ອງການ, ສ່ວນຊັ້ນເທິງຊັ້ນ 4 ຈະຖືກຈັດສັນເພື່ອຂາຍ. (ມາຮອດວັນທີ 31 ທັນວາ 2024: ຊັ້ນທີ 1 ຫາ ຊັ້ນ 10 ຈະຖືກກຳນົດໃຫ້ໃຊ້ຫ້ອງການ, ໃນຂະນະທີ່ຊັ້ນເທິງຊັ້ນ 11 ຈະຖືກຈັດສັນເພື່ອຂາຍ). ການຕັດສິນໃຈນີ້ໄດ້ຮັບ ການອະນຸມັດຢ່າງເປັນທາງການ ໂດຍຄະນະກຳມະການບໍລິຫານ

7. ຊັບສິນໝຸນວຽນອື່ນໆ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	858,416,545	668,787,196
ເງິນຄ້ຳປະກັນລ່ວງໜ້າ (*)	2,243,050,000	2,155,450,000
ອາກອນລາຍໄດ້ຈ່າຍລ່ວງໜ້າ	61,700,430,763	4,432,866,239
ອື່ນໆ	**9,057,631**	3,600,000
	64,810,954,939	**7,260,703,435**

(*) ການຊຳລະລ່ວງໜ້ານີ້ແມ່ນເປັນເງິນຄ້ຳປະກັນທີ່ມອບໃຫ້ ບໍລິສັດ ລັດພັດທະນາຊົນນະບົດ ເພື່ອຈຸດປະສົງໃນໂຄງການ ສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ ຢູ່ແຂວງຫົວພັນອີງຕາມບົດບັນທຶກຄວາມເຂົ້າໃຈ ສະບັບເລກທີ 224 ລົງວັນທີ 26 ມີນາ 2024.

8. ເຄື່ອງໃນສາງ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງ	1,132,307,449	1,141,617,690
ອຸປະກອນ ແລະ ເຄື່ອງມື	3,827,576,731	3,828,061,516
ສິນຄ້າພວມຜະລິດ	9,139,230,632	9,139,216,604
ສິນຄ້າສຳເລັດຮູບ	773,052,367	773,052,367
ຊັບສິນພວມກໍ່ສ້າງ (*)	41,217,478,339	70,779,371,116
ໂຄງການເຄື່ອງຈັກ, ອາໄຫຼ່ ແລະ ຕະຫຼາດກະສິກຳ	-	2,906,535,067
	56,089,645,518	**88,567,854,360**
ເງິນແຮສຳລັບເຄື່ອງໃນສາງ	(14,084,799,560)	(13,880,297,555)
	42,004,845,958	**74,687,556,805**

(*) ຊັບສິນພວມກໍ່ສ້າງແມ່ນເປັນຕົວແທນໃຫ້ແກ່ຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ກ່ຽວຂ້ອງກັບການພັດທະນາອາຄານຄອນໂດມິນຽມ **(**ຕຶກ **21)** ທີ່ຕັ້ງຢູ່ບ້ານໂພນພະເນົາ**,** ເມືອງໄຊເສດຖາ**,** ນະຄອນຫຼວງວຽງຈັນ**,** ສປປ ລາວ. ມາຮອດວັນທີ **30** ກັນຍາ **2025**, ຄະນະບໍລິຫານງານຂອງກຸ່ມໄດ້ກຳນົດຈຸດປະສົງການນຳໃຊ້ອາຄານ **21:** ຊັ້ນທີ **1** ຫາ ຊັ້ນ **3** ຈະຖືກກຳນົດໃຫ້ເປັນຫ້ອງການ**,** ສ່ວນຊັ້ນເທິງຊັ້ນ **4** ຈະຖືກຈັດສັນເພື່ອຂາຍ. **(**ມາຮອດວັນທີ **31** ທັນວາ **2024:** ຊັ້ນທີ **1** ຫາ ຊັ້ນ **10** ຈະຖືກກຳນົດໃຫ້ໃຊ້ຫ້ອງການ**,** ໃນຂະນະທີ່ຊັ້ນເທິງຊັ້ນ **11** ຈະຖືກຈັດສັນເພື່ອຂາຍ**).** ການຕັດສິນໃຈນີ້ໄດ້ຮັບການອະນຸມັດຢ່າງເປັນທາງການໂດຍຄະນະກຳມະການບໍລິຫານ

9. ໜີ້ຕ້ອງຮັບທາງການຄ້າ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ໜີ້ຕ້ອງຮັບການຄ້າ	15,700,000	392,289,331
ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	-	(356,267,757)
	15,700,000	**36,021,574**

ລາຍລະອຽດຂອງ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ **30** ກັນຍາ 2026 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(356,267,757)	(356,267,757)
ລວມ	(356,267,757)	(356,267,757)

9. ໜີ້ຕ້ອງຮັບທາງການຄ້າ (ຕໍ່)

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 30 ກັນຍາ 2025 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(356,267,757)	(356,267,757)
ລວມ	(356,267,757)	(356,267,757)

10. ເງິນສົດ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ເງິນສົດໃນຄັງ	22,675,653	34,264,222
ເງິນຝາກທະນາຄານ	401,312,300	754,543,247
	423,987,953	**788,807,469**

11. ໜີ້ຕ້ອງສົ່ງການຄ້າ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ	5,111,810,877	5,910,885,903
ບໍລິສັດ ແອງ ຄອນກິດ	4,569,957,642	*4,605,894,972*
ອື່ນໆ	541,853,235	*1,304,990,931*
ຄ່າບໍລິການກວດສອບ	426,281,550	497,908,950
	5,538,092,427	**6,408,794,853**

12. ເງິນລ່ວງໜ້າຈາກລູກຄ້າ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ເງິນລ່ວງໜ້າຈາກຜູ້ຊື້ຕາມສັນຍາສະສາງຊັບສິນ	550,840,000	6,109,190,000
ເງິນລ່ວງໜ້າສຳລັບຈອງຄອນໂດມິນຽມຈາກລູກຄ້າ	29,797,320,434	3,288,694,134
ເງິນລ່ວງໜ້າສຳລັບໂຄງການຕະຫຼາດກະສິກຳ, ເຄື່ອງຈັກ, ອາໄຫ່	2,017,014,698	16,165,875,000
ເງິນລ່ວງໜ້າອື່ນໆຈາກລູກຄ້າ	-	20,000,000
	32,365,175,132	**25,583,759,134**

13. ພັນທະອາກອນ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ອາກອນຕ້ອງສົ່ງຈາກຜູ້ສະໜອງຕ່າງປະເທດ	3,058,050,486	3,058,050,486
ອາກອນມູນຄ່າເພີ່ມສິ້ນອອກ	5,768,726,550	2,967,343,443
ໜີ້ຕ້ອງສົ່ງອາກອນກຳໄລ (ບົດອະທິບາຍເລກທີ 19)	479,656,526	479,656,526
ອາກອນອື່ນໆ	3,200,256,541	2,753,797,015
	12,506,690,103	**9,258,847,470**

14. ໜີ້ຕ້ອງສົ່ງອື່ນໆ

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ໜີ້ຕ້ອງສົ່ງເງິນປັນຜົນໃຫ້ພາກສ່ວນກ່ຽວຂ້ອງ (ບົດອະທິບາຍເລກທີ 20) (*)	13,581,363,960	13,581,363,960
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 20) (*)	22,594,810,575	20,790,748,039
ໜີ້ຕ້ອງສົ່ງປະກັນສັງຄົມ	35,129,781	39,674,581
ເງິນກູ້ຢືມ Laos Yao Xing Shun Industrial Sole Co.,Ltd	69,615,365,626	48,649,552,505
ອື່ນໆ	2,982,180,568	835,903,550
	108,808,850,510	**83,897,242,635**

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	30 ກັນຍາ 2026	*31 ທັນວາ 2025*
	ກີບ	*ກີບ*
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

15. ທຶນຈົດທະບຽນທີ່ໄດ້ຖອກເຂົ້າ

15.1 ຮຸ້ນ

	30 ກັນຍາ 2026		*31 ທັນວາ 2025*	
	ຈຳນວນຮຸ້ນ	*ມູນຄ່າ (ກີບ)*	*ຈຳນວນຮຸ້ນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ອອກ ແລະ ຖອກເຂົ້າ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ **14** ກຸມພາ **2018**, ກຸ່ມບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ **0008/**ສຄຄຊ ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ເນື່ອງຈາກກຸ່ມບໍລິສັດໄດ້ສຳເລັດຂັ້ນຕອນ IPO ໂດຍຮຸ້ນທັງໝົດ 40,004,000 ຮຸ້ນຂອງກຸ່ມບໍລິສັດ (ພາຍໃຕ້ຊື່ຮຸ້ນ "LCC") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ.

ໂຄງຮ່າງການຖືຮຸ້ນຂອງກຸ່ມບໍລິສັດ ນະວັນທີ **30** ກັນຍາ **202**6 ແລະ ນະວັນທີ 31 ທັນວາ 2025 ມີດັ່ງນີ້:

	30 ກັນຍາ 2026		*31 ທັນວາ 2025*	
ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັນ*	*ຈຳນວນຮຸ້ນ*	*ເປີເຊັນ*
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	14,280,000	35.696%	14,280,000	35.696%
ລັດວິສາຫະກິດ ພັດທະນາກະສິກຳ, ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34.297%	13,720,000	34.297%
ບໍລິສັດຫຼັກຊັບລາວ - ຈີນ (LCS)	7,547,800	18.868%	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນອື່ນໆ	4,456,200	11.139%	4,456,200	11.139%
	40,004,000		**40,004,000**	

16. ລາຍ ໄດ້ຈາກການດຳເນີນງານ ອື່ນໆ

	*ສຳລັບໄລຍະສາມເດືອນທີ່ ສິ້ນສຸດ **ວັນທີ 30** ກັນຍາ **202**6*	*ສຳລັບໄລຍະສາມເດືອນທີ່ ສິ້ນສຸດ ວັນທີ 30 ກັນຍາ 2025*
	ກີບ	***ກີບ***
ລາຍໄດ້ຈາກການຂາຍວັດຖຸດິບ, ເສດເຫຼັກ ແລະ ຊັບສິນ	416,727,272	478,350,000
ເກັບຄືນເງິນແຮໜີ້ທວງຍາກ	-	-
ເກັບຄືນເງິນແຮສຳລັບເຄື່ອງໃນສາງ	-	-
ອື່ນໆ	629,002,273	-
	1,045,729,545	**478,350,000**

17. ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍສ່ວນໃຫຍ່ແມ່ນຕິດພັນກັບການຢຸດຜະລິດຂອງໂຮງງານມີລາຍລະອຽດດັ່ງລຸ່ມນີ້:

	ສຳລັບໄລຍະສາມເດືອນທີ່ສິ້ນສຸດ ***ວັນທີ 30*** *ກັນຍາ* ***2026*** *ກີບ*	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2025* ***ກີບ***
ຫັກເງິນແຮສິນຄ້າໃນສາງ	-	
ລາຍຈ່າຍໃຫ້ພະນັກງານ	-	228,307,466
ສະສາງເຄື່ອງໃນສາງ	-	
ຄ່າກວດສອບສິ່ງແວດລ້ອມ	-	
ຄ່າເສື່ອມມູນຄ່າ	-	2,926,149
ຄ່າໃຊ້ຈ່າຍຫັກລ້າງອັດຖິບອອກ	-	
ສາທາລະນຸປະໂພກ ແລະ ນ້ຳມັນ	-	45,000
ອມພ ບໍ່ສາມາດຫັກໄດ້	-	
ອື່ນໆ	**8,667,352**	**95,720,000**
	8,667,352	**326,998,615**

18. ລາຍຈ່າຍໃນການບໍລິຫານ

	ສຳລັບໄລຍະສາມເດືອນທີ່ສິ້ນສຸດ ***ວັນທີ 30*** *ກັນຍາ* ***2026*** *ກີບ*	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2025* ***ກີບ***
ລາຍຈ່າຍໃຫ້ພະນັກງານ	2,390,777,491	3,246,832,577
ລາຍຈ່າຍຄ່າຫຼ້ຽຫ້ຽນ	97,236,894	158,442,649
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	63,872,810	231,127,078
ລາຍຈ່າຍຄ່າເຊົ່າ	36,021,558	54,032,337
ລາຍຈ່າຍຄ່າບຳລຸງຮັກສາ	25,850,000	304,576,597
ລາຍຈ່າຍຄ່າເດີນທາງ	3,430,000	61,227,422
ລາຍຈ່າຍຕ້ອນຮັບແຂກ ແລະ ການບັນເທີງ	-	185,179,632
ລາຍຈ່າຍຄ່າກວດສອບບັນຊີ	-	-
ຄ່າທຳນຽມທີ່ປຶກສາດ້ານກົດໝາຍ	813,816,000	-
ລາຍຈ່າຍໃນການບໍລິຫານອື່ນໆ	133,216,190	265,538,669
	3,564,220,943	**4,506,956,961**

19. ຕົ້ນທຶນທາງການເງິນ

	ສຳລັບໄລຍະສາມເດືອນທີ່ສິ້ນສຸດ ***ວັນທີ 30*** *ກັນຍາ* ***2026*** *ກີບ*	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2025* ***ກີບ***
ລາຍຈ່າຍດອກເບ້ຍ	368,018,303	*370,284,708*
ລາຍຮັບດອກເບ້ຍ	(7,495)	-22,725
ກຳໄລ/ຂາດທຶນສຸດທິຈາກອັດຕາແລກປ່ຽນ	489,491	321,434,984
	368,500,299	**691,696,967**

20. ອາກອນກຳໄລ

ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ນະວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ສຳລັບໄລຍະຈາກວັນທີ 1 ມັງກອນ 2020, ອາກອນກຳໄລ ໃນອັດຕາ 20%.

ກຸ່ມບໍລິສັດບໍ່ຮັບຮູ້ອາກອນລາຍໄດ້ຂອງບໍລິສັດທີ່ຕ້ອງຈ່າຍ ຫຼື ໜີ້ຕ້ອງຮັບໃນອະນາຄົດກ່ຽວກັບຄວາມແຕກຕ່າງຊົ່ວຄາວ. ອາກອນລາຍໄດ້ແມ່ນໄດ້ຮັບຮູ້ໂດຍອີງຕາມຜົນໄດ້ຮັບຂອງໄລຍະເວລາທີ່ກ່ຽວຂ້ອງ ແລະ ກົດໝາຍວ່າດ້ວຍອາກອນຂອງ ສປປ ລາວ.

ການມອບອາກອນຂອງກຸ່ມບໍລິສັດແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນການປີແບບລວມກິດຈະການອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສິ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ.
ໜີ້ສິນອາກອນພາຍໃນປີຂອງກຸ່ມບໍລິສັດຖືກຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນແບບລວມກິດຈະການສ□ລັບໄລຍະສາມເດືອນ.

ການຄາດຄະເນ ອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ **ວັນທີ 30** ກັນຍາ **2026*** ***ກີບ***	*ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2025* ***ກີບ***
ຂາດທຶນກ່ອນຫັກອາກອນ	**(2,893,988,967)**	**(5,047,302,544)**
ດັດແກ້ເພື່ອຫຼຸດຂາດທຶນກ່ອນຫັກອາກອນ:		
ເກັບຄືນເງິນແຮສຳລັບເຄື່ອງໃນສາງ (ບົດອະທິບາຍເລກທີ 15)		
ເກັບຄືນເງິນແຮສຳລັບໜີ້ທວງຍາກ (ບົດອະທິບາຍເລກທີ 15)		
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	29,277,000	539,239,616
ຄາດຄະເນອາກອນຂາດທຶນຕ້ອງມອບໃນປີ	**(2,864,711,967)**	**(4,508,062,928)**
ຄາດຄະເນລ່າຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 20% (2023: 20%)		
ອາກອນກຳໄລຕ້ອງຈ່າຍຕົ້ນປີ	479,656,526	479,656,526
ອາກອນກຳໄລທີ່ໄດ້ຈ່າຍໃນປີ		
ອາກອນກຳໄລຕ້ອງຈ່າຍທ້າຍປີ (ບົດອະທິບາຍເລກທີ 12)	**479,656,526**	**479,656,526**

20. ອາກອນກຳໄລ (ຕໍ່)

ຂາດທຶນທາງອາກອນຍົກໄປຫັກຕໍ່

ສຳລັບການຂາດທຶນທາງອາກອນເກີດຂຶ້ນໃນປີ 2020 ແລະ ໃນປີຕໍ່ໜ້າ, ອີງຕາມກົດໝາຍອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາທີ 23, ຂາດທຶນປະຈຳປີເຊິ່ງໄດ້ຮັບການຮັບຮອງໂດຍໜ່ວຍງານກວດສອບ ຫຼື ບໍລິສັດ ກວດສອບບັນຊີອິດສະຫຼະ ແລະ ໄດ້ຮັບການຍອມຮັບຈາກເຈົ້າໜ້າທີ່ສ່ວຍສາອາກອນ, ມີສິດຍົກໄປຫັກຕໍ່ກັບອາກອນກຳໄລ ໃນຊ່ວງໄລຍະເວລາ 5 ປີ ຫລັງຈາກເກີດການຂາດທຶນທາງອາກອນ.

ນະວັນທີໃບລາຍງານຖານະການເງິນກາງປີແບບລວມກິດຈະການ, ກຸ່ມບໍລິສັດມີຂາດທຶນທາງອາກອນສະສົມທີ່ສາມາດຫັກຕໍ່ກັບລາຍໄດ້ທາງອາກອນໃນອະນາຄົດ. ລາຍລະອຽດດັ່ງລຸ່ມນີ້:

ສະກຸນເງິນ: ກີບ

ປີທີເລີ່ມຕົ້ນ	*ສາມາດນຳໃຊ້ຮອດປີ*	*ມູນຄ່າຂາດທຶນທາງອາກອນ*	*ນຳໃຊ້ຮອດວັນທີ 30 ກັນຍາ 2024*	*ປັບໄໝ*	*ບໍ່ທັນນຳໃຊ້ນະວັນທີ 30 ກັນຍາ 2024*
2020	2025	12,384,451,613	-	-	12,384,451,613
2021	2026	13,325,630,431	-	-	13,325,630,431
2022	2027	2,398,662,436	-	-	2,398,662,436
2023	2028	542,195,702	-	-	542,195,702
2024	2029	20,883,887,754	-	-	20,883,887,754
2025	2030	4,508,062,928	-	-	4,508,062,928
ທັງໝົດ		**54,042,890,864**	**-**		**54,042,890,864**

ການຂາດທຶນທາງອາກອນທີ່ຄາດຄະເນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ແມ່ນຍັງບໍ່ໄດ້ຮັບການກວດສອບຈາກເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ

ນະວັນທີຂອງເອກະສານລາຍງານການເງິນແບບລວມກິດຈະການສຳລັບໄລຍະສາມເດືອນ ເຫຼົ່ານີ້.

ບໍ່ມີການຮັບຮູ້ອາກອນເງື່ອນຊຳລະທີ່ຍັງເຫຼືອຢູ່ໃນຈຳນວນ LAK 79,532,894,042 ກີບ ຍ້ອນວ່າລາຍຮັບທີ່ຕ້ອງເສຍອາກອນໃນອະນາຄົດບໍ່ສາມາດກວດສອບໄດ້ໃນຂັ້ນຕອນນີ້.

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້.

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ກັນຍາ 2026 ກີບ*	*31 ທັນວາ 2025 ກີບ*
ທ່ານ ເນ້ຍ ເຫຼຍ	ຜູ້ອຳນວຍການໃຫຍ່	ເງິນກູ້ຢືມ	1,766,653,534	-
		ຊຳລະເງິນກູ້ຢືມຄືນ		448,062,500

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ກັນຍາ 2025 ແລະ ວັນທີ 31 ທັນວາ 2024 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ກັນຍາ 2026 ກີບ*	*31 ທັນວາ 2025 ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
HK XIANGHUA LIMIED NO4	ພາກສ່ວນທີ່ກ່ຽວຂ້ອງ	ເງິນກູ້ຢືມ	1,018,290,536	7,501,625,000
		ດອກເບ້ຍເງິນກູ້ຢືມ	630,720,000	549,650,963
Yunnan Hengshi Chengrui Holdings Co., Ltd (“Yunnan Qianhan”)	ຜູ້ຖືຮຸ້ນ	ເງິນກູ້ຢືມ		301,917,650
		ດອກເບ້ຍເງິນກູ້ຢືມ		168,338,162
Mr. Li Xue Bing	ຮອງອຳນວຍການ	ເງິນກູ້ຢືມ	155,052,000	-
		ຊຳລະເງິນກູ້ຢືມຄືນ		22,567,500
Mr. Wang Hui	ອຳນວຍການ	ເງິນກູ້ຢືມ	-	222,564,810
		ຊຳລະເງິນກູ້ຢືມຄືນ	-	141,630,000
Mr. Ding Yu Dong	ອຳນວຍການ	ເງິນກູ້ຢືມ	-	-

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ກັນຍາ 20256 ແລະ ວັນທີ 31 ທັນວາ 2025ດັ່ງລຸ່ມນີ້:

	ສາຍພົວພັນ	*ລາຍການເຄື່ອນໄຫວ*	*30 ກັນຍາ 2026 ກີບ*	*31 ທັນວາ 2025 ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ເງິນລ່ວງໜ້າ	1,000,000,000	1,000,000,000

ຍອດເຫຼືອໜີ້ຕ້ອງສົ່ງຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ກັນຍາ *2025* ແລະ ວັນທີ 31 ທັນວາ 2024 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ກັນຍາ 2026 ກີບ*	*31 ທັນວາ 2025 ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ໂອນໜີ້ສຸດທິຈາກ CYC	2,854,870,775	2,742,855,492
		ກູ້ຢືມ (*)		55,072,855
ລັດວິສາຫະກິດພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,374,818,540	4,374,818,539
ທ່ານ ເນ້ຍ ເຫຼີຍ	ຜູ້ອຳນວຍການໃຫຍ່	ກູ້ຢືມ (*)	4,374,818,540	5,796,969,212
			11,604,507,855	**12,969,716,098**
ໜີ້ຕ້ອງສົ່ງອື່ນໆ *(ບົດອະທິບາຍເລກທີ 13)*				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	7,736,383,104	7,736,383,104
ລັດວິສາຫະກິດ ພັດທະນາກະສິກຳ, ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ(DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	5,844,980,856	5,844,980,856
			13,581,363,960	**13,581,363,960**
ໜີ້ຕ້ອງສົ່ງອື່ນໆ *(ບົດອະທິບາຍເລກທີ 13)*				
Mr. Li Xue Bing	ຮອງຜູ້ອຳນວຍການ	ກູ້ຢືມ (*)	3,970,198,500	3,815,146,500
Mr. Ding Yu Dong	ຜູ້ອຳນວຍການ	ກູ້ຢືມ (*)	200,000,000	200,000,000
HK XIANGHUA LIMITED NO4	ພາກສ່ວນທີ່ກ່ຽວຂ້ອງ	ກູ້ຢືມ (*)	16,149,960,000	15,519,240,000
		ດອກເບ້ຍເງິນກູ້	2,274,652,075	1,256,361,539
			22,594,810,575	**20,790,748,039**

(*) ***ສິ່ງເຫຼົ່ານີ້ສະແດງເຖິງການບໍ່ມີດອກເບ້ຍທີ່ປອດໄພກັບການກູ້ຢືມແບບບໍ່ມີກຳນົດ.***
(**) ***ເລີ່ມແຕ່ວັນທີ*** 1 ກໍລະກົດ 2025 ***ເປັນຕົ້ນໄປ***,
ເງິນກູ້ເຫຼົ່ານີ້ສະແດງເຖິງການກູ້ຢືມທີ່ບໍ່ມີຄວາມປອດໄພດ້ວຍດອກເບ້ຍ 10% ***ແລະໝົດກຳນົດໃນວັນທີ*** 30 ***ທັນວາ*** 2025.

21. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະອຳນວຍການຍາມໃນປີມີດັ່ງລຸ່ມນີ້:

	ສຳລັບໄລຍະສາມເດືອນ ທີ່ສິ້ນສຸດ ວັນທີ 30 ກັນຍາ 2026 ກີບ	*ສຳລັບໄລຍະສາມເດືອນ ທີ່ສິ້ນສຸດ ວັນທີ 30 ກັນຍາ 2025 ກີບ*
ເງິນເດືອນ	852,102,000	579,685,000
	852,102,000	**579,685,000**

22. ພັນທະສັນຍາ

ມາຮອດວັນທີ 30 ກັນຍາ 2026, ກຸ່ມບໍລິສັດດັ່ງກ່າວໄດ້ລົງນາມໃນສັນຍາຮ່ວມມືລົງທຶນໂຄງການກໍ່ສ້າງ 21 ໃຕ້ຕາມສັນຍາສະບັບເລກທີ LCTC-E25011 ກັບຜູ້ລົງທຶນບໍລິສັດ ລາວໄຈ່ອຶ້ງ ອຸດສາຫະກຳ ຈຳກັດ ("LYX"). ດ້ວຍເຫດນັ້ນ, ໃນຊຸມປີຕໍ່ໜ້າ, ກຸ່ມບໍລິສັດໄດ້ຕົກລົງຈະຈ່າຍ LYX 8 ລ້ານ USD ໃຫ້ແກ່ການຂາຍອາຄານ, ພ້ອມກັບຈຳນວນເງິນເພີ່ມເຕີມອີກ 4 ລ້ານ USD ໂດຍອີງໃສ່ຜົນກຳໄລຂອງໂຄງການ.

23. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 30 ກັນຍາ 2026 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນແບບລວມກິດຈະການສຳລັບໄລຍະສາມເດືອນ.

24. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນແບບລວມກິດຈະການສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 30 ກັນຍາ 2026 ແມ່ນໄດ້ຖືກອະນຸມັດໂດຍຄະນະອຳນວຍການຂອງກຸ່ມບໍລິສັດ ໃນວັນທີ 18 ພະຈິກ 2026

ທ່ານ ຫລີ ຮ້ຳວ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງຫົວ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພະຈິກ 2026